**ມິຊຊາອາທິດທີ 3 ການົດທຳມະດາ**

**ວັນທີ 24 ມັງກອນ 2021**



**ພຣະວໍຣະສານໂດຍນັກບຸນມັກໂກ 1, 14-20**

ຫລັງຈາກຍວງບາບຕິສຕາຖືກຈັບແລ້ວ, ພຣະເຢຊູເຈົ້າກໍສະເດັດໄປສູ່ແຂວງກາລີເລ, ທ່ຽວປະກາດຂ່າວປະເສີດຂອງພຣະເຈົ້າວ່າ: “ເຖິງເວລາກຳນົດແລ້ວ, ອານາຈັກຂອງພຣະເຈົ້າໃກ້ເຂົ້າມາແລ້ວ. ຈົ່ງເປັນທຸກກັບໃຈມາເຊື່ອຂ່າວປະເສີດເຖີດ”.

ເມື່ອສະເດັດລຽບຝັ່ງທະເລສາບກາລີເລໄປນັ້ນ, ພຣະອົງຊົງຫລຽວເຫັນສອງຄົນອ້າຍນ້ອງຄືຊີມອນກັບອັນເດຣ ຜູ້ນ້ອງຊາຍກຳລັງກວາດມອງຢູ່ໃນທະເລຍ້ອນວ່າທັງສອງເປັນຊາວປະມົງ. ພຣະເຢຊູເຈົ້າກ່າວກັບເຂົາວ່າ: “ຈົ່ງຕິດຕາມເຮົາມາເຖີດ. ເຮົາຈະໃຫ້ພວກເຈົ້າເປັນຊາວປະມົງຈັບມະນຸດ”. ພວກເຂົາປະມອງໄວ້ທັນທີແລ້ວຕິດຕາມພຣະອົງໄປ. ໄປອີກບໍ່ໄກ, ພຣະເຢຊູເຈົ້າຫລຽວເຫັນຢາໂກເບບຸດຂອງເຊເບເດກັບຍວງຜູ້ນ້ອງຊາຍກຳລັງຝຽນມອງຢູ່ໃນເຮືອ. ທັນທີພຣະເຢຊູເຈົ້າຊົງຮຽກເຂົາ, ເຂົາກໍປະເຊເບເດຜູ້ບິດາກັບພວກລູກຈ້າງໄວ້ໃນເຮືອ ແລະຕິດຕາມພຣະອົງໄປ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ມກ 1, 14-20**

ອາທິດທີ່ຜ່ານມາ, ວາຈາພຣະເຈົ້າເຊື້ອເຊີນພວກເຮົາໃຫ້ຟັງສຽງຮຽກເອີ້ນຂອງພຣະອົງແລະຕອບຕໍ່ສຽງຮຽກເອີ້ນນັ້ນດ້ວຍການຕິດຕາມພຣະອົງໄປ.

ວັນອາທິດນີ້, ວາຈາພຣະເຈົ້າຮຽກເອີ້ນພວກເຮົາໃຫ້ຜັນປ່ຽນຊີວິດຈາກການກະທຳບໍ່ດີຕ່າງໆນາໆ, ຈາກການຜູກພັນນຳຄວາມຮັ່ງມີແລະຄວາມສຸກຂອງໂລກທີ່ສູນເສຍເປັນນີ້ ເພື່ອກັບໄປຫາຄວາມສຸກທີ່ຖາວອນຄືອານາຈັກສະຫວັນ.

ດັ່ງໃນບົດອ່ານທີໜຶ່ງຊຶ່ງພວກເຮົາໄດ້ຟັງວັນນີ້ຈາກໜັງສືຂອງປະພາສົກຢໍນາ. ພຣະເຈົ້າໄດ້ສັ່ງໃຫ້ຢໍນາໄປປ່າວປະກາດການເປັນທຸກກັບໃຈໃຫ້ກັບຊາວເມືອງນີນີເວ. ຍ້ອນຄວາມບໍ່ດີຂອງພວກເຂົາໄດ້ຂຶ້ນໄປເຖິງພຣະເຈົ້າແລ້ວ. ຖ້າພວກເຂົາບໍ່ກັບຈິດປ່ຽນໃຈ, ພຣະເຈົ້າກໍຈະທຳລາຍພວກເຂົາໃຫ້ພິນາດ. ພໍແຕ່ຊາວເມືອງນີນີເວໄດ້ຍິນຄຳປະກາດຂອງປະພາສົກຢໍນາເຖິງການກັບໃຈ, ພວກເຂົາພ້ອມທັງກະສັດແລະຝູງສັດທັງໝົດກໍອົດອາຫານ, ນຸ່ງຜ້າກະສອບອັນເປັນເຄື່ອງໝາຍແຫ່ງການກັບໃຈ. ແລ້ວພຣະເຈົ້າກໍໄດ້ປ່ຽນໃຈບໍ່ລົງໂທດພວກເຂົາອີກ. ເຫດການນີ້ສະທ້ອນໃຫ້ເຫັນວ່າ ການກັບໃຈຢ່າງແທ້ຈິງຕ້ອງໄປຄຽງຄູ່ກັບການກະທຳຄືການຜັນປ່ຽນເສັ້ນທາງອັນບໍ່ດີແລ້ວກັບມາຫາເສັ້ນທາງອັນຖືກຕ້ອງ.

ສ່ວນໃນບົດອ່ານທີສອງນັກບຸນເປົາໂລກໍຕັກເຕືອນຊາວໂກຣິນໂທວ່າ: ເວລາທີ່ພວກເຮົາມີຢູ່ນີ້ເຫລືອນ້ອຍເຕັມທີ. ຖ້າຜູ້ໃດຍັງຕິດພັນກັບຄວາມມ່ວນຊື່ນຝ່າຍເນື້ອໜັງແລະຄວາມຮັ່ງມີຂອງໂລກນີ້ກໍໃຫ້ກັບຈິດປ່ຽນໃຈສາ. ຍ້ອນໂລກທີ່ພວກເຮົາເຫັນຢູ່ນີ້ກຳລັງຈະສູນເສຍໄປ.

ໃນພຣະວໍລະສານເມື່ອຢວງບັບຕິສຕາຖືກຈັບ, ພຣະເຢຊູເຈົ້າກໍສືບຕໍ່ພາລະກິດຂອງທ່ານດ້ວຍການປະກາດເຖິງອານາຈັກສະຫວັນແລະການເປັນທຸກກັບໃຈ. ອານາຈັກສະຫວັນທີ່ພຣະເຢຊູເຈົ້າກ່າວນີ້ບໍ່ແມ່ນສິ່ງອື່ນໃດ ນອກຈາກຕົວຂອງພຣະອົງເອງ. ຖ້າຜູ້ໃດຢາກໄດ້ອານາຈັກສະຫວັນ, ຜູ້ນັ້ນຕ້ອງໄດ້ສະລະທຸກສິ່ງບໍ່ວ່າຈະເປັນ: ພໍ່ແມ່, ຄອບຄົວ, ອາຊີບການງານ. ເໝືອນກັບລູກສິດສີ່ຄົນທຳອິດທີ່ພຣະອົງໄດ້ຊົງຮຽກເອີ້ນວັນນີ້. ພວກເຂົາໄດ້ປະອາຊີບຊາວປະມົງ, ພໍ່ແມ່, ຄອບຄົວ, ແລ້ວຕິດຕາມພຣະອົງໄປ.

**ພາວະນາ**

ໂອພຣະເຢຊູເຈົ້າ ໂຜດຊ່ວຍລູກໃຫ້ຮູ້ຈັກເປັນທຸກກັບໃຈຢູ່ສະເໝີ ດ້ວຍການຜັນປ່ຽນຊີວິດບໍ່ຕິດພັນນຳສິ່ງທີ່ສູນເສຍເປັນ ແລ້ວຫັນມາຫາພຣະອົງຜູ້ເປັນບໍ່ເກີດແລະຊີວິດຂອງລູກດ້ວຍເທີ້ນ. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ